ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 216 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 17.12.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການປະກາດໃຊ້ກົດໝາຍ ສະພາປະຊາຊົນຂັ້ນແຂວງ**

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 014/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 030/ຄປຈ, ລົງວັນທີ 14 ທັນວາ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 2.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 014 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 10 ທັນວາ 2015

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 65 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2015

# ກົດໝາຍ
# ວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີ ຄຸນນະພາບ ແລະ ປະສິດທິພາບ, ແນໃສ່ ເພີ່ມທະວີຄວາມສັກສິດ ແຫ່ງການຄຸ້ມຄອງເສດຖະກິດ-ສັງຄົມ, ສືບຕໍ່ສ້າງ ແລະ ປັບປຸງ ອຳນາດລັດຂັ້ນທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ, ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ.

**ມາດຕາ 2 ສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ, ປະຕິບັດພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນທ້ອງຖິ່ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະພາປະຊາຊົນຂັ້ນແຂວງ** ໝາຍເຖິງ ສະພາປະຊາຊົນແຂວງ, ນະຄອນຫຼວງ;
2. **ອຳນາດລັດຂັ້ນທ້ອງຖິ່ນ** ໝາຍເຖິງ ອຳນາດຂອງປະຊາຊົນໃນທ້ອງຖິ່ນ ຊຶ່ງມອບໃຫ້ສະພາປະຊາຊົນຂັ້ນແຂວງເປັນຕົວແທນ;

3. **ນິຕິກຳທີ່ສຳຄັນຂອງທ້ອງຖິ່ນ** ໝາຍເຖິງ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິ ແລະ ຂໍ້ຕົກລົງ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ຂໍ້ຕົກລົງ ຂອງອົງການປົກຄອງທ້ອງຖິ່ນ;

4. **ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ** ໝາຍເຖິງ ບັນຫາທາງດ້ານການເມືອງ ແລະ ການປົກຄອງ, ດ້ານເສດຖະກິດ-ສັງຄົມ, ການເລືອກຕັ້ງ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງທີ່ສຳຄັນໃນກິງຈັກລັດຂອງທ້ອງຖິ່ນ ຊຶ່ງແມ່ນສະພາປະຊາຊົນຂັ້ນແຂວງເປັນ ຜູ້ພິຈາລະນາຮັບຮອງເອົາ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການເຄື່ອນໄຫວວຽກງານສະພາປະຊາຊົນຂັ້ນແຂວງ

ລັດ ໃຫ້ຄວາມສຳຄັນຕໍ່ການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນຂັ້ນແຂວງ ດ້ວຍການເຊີດຊູບົດບາດ ຂອງສະພາປະຊາຊົນຂັ້ນແຂວງໃຫ້ສູງຂຶ້ນ.

ລັດ ຊຸກຍູ້ບັນດາອົງການລັດຂັ້ນທ້ອງຖິ່ນ ເພີ່ມທະວີການພົວພັນ, ຮ່ວມມືໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສະພາປະຊາຊົນຂັ້ນແຂວງນັ້ນ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປຸກລະດົມໃຫ້ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມຂັ້ນທ້ອງຖິ່ນ, ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານສະພາປະຊາຊົນຂັ້ນແຂວງ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ ດ້ວຍການສະໜອງບຸກຄະລາກອນ ທີ່ມີຄວາມຮູ້ ຄວາມສາມາດ, ງົບປະມານ, ພື້ນຖານໂຄງລ່າງ ແລະ ເງື່ອນໄຂອື່ນ ທີ່ຈຳເປັນ.

### ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ລວມສູນປະຊາທິປະໄຕ;
2. ນິຕິທຳ;
3. ຍຸຕິທຳ;
4. ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ;
5. ຕົກລົງບັນຫາ ຕາມສຽງສ່ວນຫຼາຍ;
6. ຕິດແທດຕິດຈິງກັບປະຊາຊົນ ແລະ ຮາກຖານ;
7. ປະສານສົມທົບຢ່າງກົມກຽວກັບອົງການອຳນາດລັດ ທີ່ກ່ຽວຂ້ອງ ແລະ ອົງການອື່ນ.

### ມາດຕາ 6 ອາຍຸການຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງແຕ່ລະຊຸດ ມີອາຍຸການ ຫ້າປີ ຊຶ່ງເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າ ຫົກສິບວັນກ່ອນສະພາປະຊາຊົນຂັ້ນແຂວງ ຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ມີຄວາມຫຍຸ້ງຍາກ ໃຫ້ແກ່ການເລືອກຕັ້ງ ຍ້ອນສະພາບການໃດໜຶ່ງນັ້ນ ກໍສາມາດຕໍ່ອາຍຸການຂອງສະພາປະຊາຊົນຂັ້ນແຂວງໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນ ສາມເດືອນ ພາຍຫຼັງສະພາບການດັ່ງກ່າວ ໄດ້ກັບຄືນສູ່ຄວາມເປັນປົກກະຕິ.

ໃນກໍລະນີທີ່ມີຄວາມຈຳເປັນ ສະພາປະຊາຊົນຂັ້ນແຂວງ ຈະດຳເນີນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ກ່ອນໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 7 ການຮ່ວມມືສາກົນ

ສະພາປະຊາຊົນຂັ້ນແຂວງ ພົວພັນຮ່ວມມື ກັບການຈັດຕັ້ງສະພາປະຊາຊົນທ້ອງຖິ່ນຂອງຕ່າງປະເທດ ບົນພື້ນຖານນະໂຍບາຍການຕ່າງປະເທດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຝຶກອົບຮົມ ຫຼື ສຳມະນາ ຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ.

## ພາກທີ II
## ສະພາປະຊາຊົນຂັ້ນແຂວງ
## ໝວດທີ 1
## ທີ່ຕັ້ງ ແລະ ພາລະບົດບາດ ຂອງສະພາປະຊາຊົນຂັ້ນແຂວງ

### ມາດຕາ 8 ທີ່ຕັ້ງຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ແລະ ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ.

### ມາດຕາ 9 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ມີພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົານິຕິກຳ ທີ່ສຳຄັນຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາ ການເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນທ້ອງຖິ່ນ.

## ໝວດທີ 2
## ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ

### ມາດຕາ 10 ສິດ ແລະ ໜ້າທີ່ ລວມຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ສິດ ແລະ ໜ້າທີ່ ດ້ານນິຕິກຳ;
2. ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ;
3. ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ.

### ມາດຕາ 11 ສິດ ແລະ ໜ້າທີ່ ດ້ານນິຕິກຳ

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານນິຕິກຳ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາ ນິຕິກຳທີ່ສຳຄັນຂອງທ້ອງຖິ່ນ;
2. ຄົ້ນຄວ້າ ປະກອບຄຳເຫັນເຂົ້າໃສ່ ຮ່າງລັດຖະທຳມະນູນ, ກົດໝາຍ ທີ່ສະພາແຫ່ງຊາດສົ່ງໃຫ້;
3. ພິຈາລະນາ, ຮັບຮອງເອົາ ທິດທາງວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ;
4. ພິຈາລະນາ, ຮັບຮອງເອົາທິດທາງວຽກງານ ຫ້າປີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ຂັ້ນແຂວງ;
5. ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ນິຕິກຳອື່ນ ຂອງທຸກຂະແໜງການ ທີ່ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບ ລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນ ຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
6. ມອບສິດ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

### ມາດຕາ 12 ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານ ຂອງທ້ອງຖິ່ນ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ:

1.1. ຮັບຟັງການລາຍງານ ແລະ ປະກອບຄຳເຫັນໃສ່ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງທ້ອງຖິ່ນ;

1.2. ພິຈາລະນາ, ຮັບຮອງເອົາການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ, ນະຄອນ ແລະ ການກຳນົດເຂດແດນຂອງເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

1.3. ລົງມະຕິບໍ່ໄວ້ວາງໃຈບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ ເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ:

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ ແລະ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນດັ່ງກ່າວ;

2.2. ພິຈາລະນາ, ຮັບຮອງເອົາແຜນການແບ່ງປັນງົບປະມານປະຈຳປີ ຕາມການແບ່ງປັນຂອງລັດຖະບານ;

2.3. ພິຈາລະນາ, ຮັບຮອງເອົາແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນໃນທ້ອງຖິ່ນ; ພິຈາລະນາ, ຮັບຮອງເອົາແຜນພັດທະນາ ຕົວເມືອງ, ເທດສະບານ, ນະຄອນ;

2.4. ພິຈາລະນາ, ຮັບຮອງເອົາແຜນການກໍ່ສ້າງພື້ນຖານໂຄງລ່າງ ປະຈຳປີ ຂອງ ທ້ອງຖິ່ນ ແລະ ໂຄງການລະດັບທ້ອງຖິ່ນຮັບຜິດຊອບ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2.5. ຮັບຟັງການລາຍງານ ຜົນຂອງການກວດສອບ ແລະ ການສະຫຼຸບງົບປະມານ ຂາດຕົວຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບແຂວງນັ້ນ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ:

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາປະຊາຊົນຂັ້ນແຂວງ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ຄະນະກຳມະການ ແລະ ຄະນະເລຂາທິການຂອງສະພາປະຊາຊົນຂັ້ນແຂວງ;

3.1.2.ພິຈາລະນາ,ຮັບຮອງເອົາການສະເໜີຂອງເຈົ້າແຂວງ,ເຈົ້າຄອງນະຄອນຫຼວງກ່ຽວກັບການສ້າງຕັ້ງ,ຍຸບເລີກ,ແຍກອອກ,ໂຮມເຂົ້າພະແນກ,ອົງການລັດທຽບເທົ່າພະແນກຂັ້ນແຂວງ.

3.2. ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ, ກຳມະການຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

3.2.3. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.4. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການ ຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3.2.5. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕໍາແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າ ພະແນກ ຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງ ນະຄອນຫຼວງ.

**ມາດຕາ 13 ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ ດັ່ງນີ້:

1. ຕິດຕາມກວດກາ ບັນດາອົງການລັດຂັ້ນທ້ອງຖິ່ນຂອງຕົນ ໃນການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາ ແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິ ແລະ ຂໍ້ຕົກລົງ ຂອງຄະນະປະຈໍາ ສະພາປະຊາຊົນຂັ້ນແຂວງ;

2. ຕິດຕາມກວດກາ ການອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ການຈັດຕັ້ງປະຕິບັດ ວຽກງານ ຂອງອົງການປົກຄອງທ້ອງຖິ່ນຕົນ;

3. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານທາງ ດ້ານການເມືອງ ແລະ ການປົກ ຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

4. ຕິດຕາມກວດກາ ລາຍຮັບ ລາຍຈ່າຍງົບປະມານ ຂັ້ນແຂວງ ແລະ ຂັ້ນເມືອງ.

## ໝວດທີ 3
## ການສະເໜີ ແລະ ການພິຈາລະນາຮ່າງນິຕິກໍາ

**ມາດຕາ 14 ການສະເໜີຮ່າງນິຕິກໍາ**

ອົງການອໍານາດລັດຂັ້ນແຂວງ ມີສິດສະເໜີສ້າງຮ່າງນິຕິກໍາທີ່ສໍາຄັນຂອງທ້ອງຖິ່ນ ຕໍ່ຄະນະປະ ຈໍາສະພາປະຊາຊົນຂັ້ນແຂວງ ໂດຍແຈ້ງຈຸດປະສົງ ແລະ ເຫດຜົນ ຂອງການສ້າງ ຮ່າງນິຕິກໍາ ຫຼື ປັບປຸງ ນິຕິກໍາ ພ້ອມດ້ວຍການຄາດຄະເນຜົນກະທົບ ຫຼື ຜົນທີ່ຈະໄດ້ຮັບ ຈາກການຈັດຕັ້ງປະຕິບັດນິຕິກໍາ ດັ່ງກ່າວ.

ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕ້ອງພິຈາລະນາ, ໃຫ້ທິດຊີ້ນໍາ ແລະ ຕອບຄໍາສະເໜີ ດັ່ງກ່າວ ເປັນລາຍລັກອັກສອນ ຢ່າງຊ້າບໍ່ໃຫ້ເກີນ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາສະເໜີນັ້ນ ເປັນຕົ້ນ ໄປ.

**ມາດຕາ 15 ການຄົ້ນຄວ້າຮ່າງນິຕິກໍາ ໃນກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ**

ອົງການອໍານາດລັດຂັ້ນແຂວງ ທີ່ໄດ້ສ້າງ ຫຼື ປັບປຸງຮ່າງນິຕິກໍາ ສໍາເລັດແລ້ວ ຕ້ອງສົ່ງຮ່າງນິຕິ ກໍານັ້ນ ໃຫ້ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາຢ່າງຊ້າ ຫົກສິບວັນ ກ່ອນວັນເປີດກອງ

ປະຊຸມສະພາປະຊາຊົນຂັ້ນແຂວງ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມອບຮ່າງນິຕິກຳ ໃຫ້ຄະນະກຳມະການທີ່ກ່ຽວຂ້ອງ ເພື່ອສົມທົບກັບອົງການທີ່ຮັບຜິດຊອບສ້າງ ຫຼື ປັບປຸງ ນິຕິກຳນັ້ນ ເພື່ອຄົ້ນຄວ້າລະອຽດ, ກວດກາຮອບດ້ານ ແລ້ວລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງກ່ຽວກັບການນຳເອົາຮ່າງນິຕິກຳນັ້ນ ໄປປຶກສາຫາລື ຫຼື ທາບທາມກັບປະຊາຊົນດ້ວຍຮູບການຕ່າງໆ ຕາມແຕ່ລະກໍລະນີ ແລ້ວນຳມາຄົ້ນຄວ້າ, ປັບປຸງຄືນ ກ່ອນທີ່ຈະນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

**ມາດຕາ 16 ການພິຈາລະນາຮ່າງນິຕິກຳ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ສະເໜີໃຫ້ຜູ້ຕາງໜ້າອົງການອຳນາດລັດຂັ້ນແຂວງ ທີ່ສ້າງ ແລະ ປັບປຸງຮ່າງນິຕິກຳ ເປັນຜູ້ສະເໜີຮ່າງນິຕິກຳ ໂດຍສັງລວມ ແຕ່ລະ ພາກ, ໝວດ ແລະ ມາດຕາ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ. ຈາກນັ້ນປະທານ ຈຶ່ງເຈາະຈີ້ມ ບັນຫາທີ່ເປັນພື້ນຖານຂອງຮ່າງນິຕິກຳ ເພື່ອໃຫ້ກອງປະຊຸມປະກອບຄວາມເຫັນ.

ພາຍຫຼັງ ຄະນະຮັບຜິດຊອບສ້າງ ແລະ ປັບປຸງຮ່າງນິຕິກຳ ໄດ້ຊີ້ແຈງ ແລະ ອະທິບາຍ ບັນຫາທີ່ສະມາຊິກສະພາປະຊາຊົນຂັ້ນແຂວງສົນໃຈ ຫຼື ຍົກຂຶ້ນແລ້ວ ຈຶ່ງໃຫ້ກອງປະຊຸມ ພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາ.

## ໝວດທີ 4
## ການສະເໜີ ແລະ ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

**ມາດຕາ 17 ການສະເໜີ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

ອົງການອຳນາດລັດຂັ້ນທ້ອງຖິ່ນ ມີສິດສະເໜີ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 18 ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໃນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າພິຈາລະນາ ແລະ ລາຍງານບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້ ຍົກເວັ້ນ ການພິຈາລະນາ ກ່ຽວກັບການເລືອກຕັ້ງ ແລະ ການຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 3 ຂອງກົດໝາຍສະບັບນີ້ ແລ້ວລາຍງານ ຕໍ່ ກອງປະຊຸມສະພາປະຊາຊົນຂັ້ນແຂວງພິຈາລະນາ.

**ມາດຕາ 19 ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນ ພື້ນຖານຂອງທ້ອງຖິ່ນ ຕາມການສະເໜີ ຂອງອົງການປົກຄອງຂັ້ນແຂວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງຂອງລັດຂັ້ນແຂວງ.

## ໝວດທີ 5
## ການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 20 ການຄົ້ນຄວ້າ ແລະ ສ້າງແຜນການຕິດຕາມກວດກາ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ ແລະ ສ້າງແຜນການຕິດຕາມກວດກາຂອງຕົນໃນແຕ່ລະໄລຍະ ໂດຍສອດຄ່ອງກັບແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊີ້ນຳໃຫ້ຄະນະກຳມະການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດແຜນການຕິດຕາມກວດກາດັ່ງກ່າວ.

**ມາດຕາ 21 ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ ດຳເນີນໂດຍຜ່ານຮູບການ ດັ່ງນີ້:

1. ກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນຂັ້ນແຂວງ;
4. ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 22 ການຕິດຕາມກວດກາ ໂດຍກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ປະທານສານປະຊາຊົນ ທ້ອງຖິ່ນ;

2. ນິຕິກຳຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ແລະ ນິຕິກຳອື່ນ ຂອງທ້ອງຖິ່ນຕົນ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

3. ການຊັກຖາມ ແລະ ການຕອບຄຳຊັກຖາມຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ປະທານສານປະຊາຊົນ ທ້ອງຖິ່ນ;

4. ການແກ້ໄຂຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ ຂອງປະຊາຊົນ.

**ມາດຕາ 23 ການຕິດຕາມກວດກາ ໂດຍຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ, ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ;

2. ນິຕິກຳຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ແລະ ນິຕິກຳອື່ນ ຂອງທ້ອງຖິ່ນຕົນ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

3. ການໃຫ້ຄວາມກະຈ່າງແຈ້ງຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ປະທານສານປະຊາຊົນ ທ້ອງຖິ່ນ ໃນກໍລະນີທີ່ເຫັນວ່າຈຳເປັນ;

4. ບົດລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

5. ບົດລາຍງານຂອງຄະນະສະເພາະກິດ ກ່ຽວກັບບັນຫາໃດໜຶ່ງ ຖ້າຫາກມີ ;

6. ການແກ້ໄຂຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ ຂອງປະຊາຊົນ.

**ມາດຕາ 24 ການຕິດຕາມກວດກາ ໂດຍຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງຂະແໜງການ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ຄົ້ນຄວ້າບົດລາຍງານອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

ນອກຈາກການຕິດຕາມກວດກາບົດລາຍງານແລ້ວ ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ຍັງມີສິດເຊີນຂະແໜງການ ຫຼື ບຸກຄົນທີ່ກ່ຽວຂ້ອງ ມາລາຍງານບັນຫາໃດໜຶ່ງທີ່ຕົນມີຄວາມສົນໃຈ;

2. ການລົງຕິດຕາມກວດກາ ສະພາບການຈັດຕັ້ງປະຕິບັດຕົວຈິງ ຢູ່ທ້ອງຖິ່ນຕົນ;

3. ນິຕິກຳຂອງຂະແໜງການ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນຕົນ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

4. ການເຂົ້າຮ່ວມໃນໜ່ວຍງານສະເພາະກິດ ຕາມການມອບໝາຍຂອງຄະນະປະຈຳສະພາ ປະຊາຊົນຂັ້ນແຂວງ;

5. ການແກ້ໄຂຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ ຂອງປະຊາຊົນ.

**ມາດຕາ 25 ການຕິດຕາມກວດກາໂດຍສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານຂອງພາກສ່ວນຕ່າງໆ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ;

2. ຕັ້ງຄຳຖາມ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຊັກຖາມ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ປະທານສານປະຊາຊົນ ທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ;

3. ນິຕິກຳຂອງຂະແໜງການ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນຕົນ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;

4. ການລົງຕິດຕາມກວດກາ ສະພາບການຈັດຕັ້ງປະຕິບັດຕົວຈິງ ຢູ່ທ້ອງຖິ່ນຕົນ;

5. ການເຂົ້າຮ່ວມໃນໜ່ວຍງານສະເພາະກິດ ຕາມການແຕ່ງຕັ້ງຂອງຄະນະປະຈຳ ຫຼື ປະທານຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ;

6. ການເຂົ້າຮ່ວມໃນການຄົ້ນຄວ້າ ແກ້ໄຂຄຳຮ້ອງທຸກ ແລະ ໂທລະສັບສາຍດ່ວນ ຂອງປະຊາຊົນ.

**ມາດຕາ 26 ການລາຍງານ ແລະ ການພິຈາລະນາຜົນການຕິດຕາມກວດກາ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ການລາຍງານ ແລະ ການພິຈາລະນາຜົນການຕິດຕາມກວດກາ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ຮັບຟັງການລາຍງານກ່ຽວກັບຜົນການຕິດຕາມກວດກາ ຂອງບັນດາການຈັດຕັ້ງຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍ ສະບັບນີ້;
2. ປະກອບຄຳເຫັນ, ຊັກຖາມ ແລະ ຕັ້ງຄຳຖາມ ກ່ຽວກັບການລາຍງານດັ່ງກ່າວ;
3. ຮັບຟັງການຊີ້ແຈງອະທິບາຍຂອງພາກສ່ວນທີ່ຖືກຕິດຕາມກວດກາ;
4. ພິຈາລະນາຮັບຮອງເອົາຜົນການຕິດຕາມກວດກາ ລວມທັງມາດຕະການແກ້ໄຂ;
5. ແນະນຳໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຜົນການຕິດຕາມກວດກາ.

## ພາກທີ III
## ໂຄງປະກອບ ຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 27 ໂຄງປະກອບ ຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ໂຄງປະກອບ ດັ່ງນີ້:

1. ສະມາຊິກສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ປະທານ, ຮອງປະທານສະພາປະຊາຊົນຂັ້ນແຂວງ;
4. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
5. ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ.

## ໝວດທີ 1
## ສະມາຊິກສະພາປະຊາຊົນຂັ້ນແຂວງ

**ມາດຕາ 28 ສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນແຂວງ.

**ມາດຕາ 29 ມາດຕະຖານຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ;

2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈົງຮັກພັກດີ ແລະ ຕັ້ງຕໍ່ບໍລິສຸດຕໍ່ປະເທດຊາດ, ຖືເອົາຜົນປະໂຫຍດຂອງປະຊາຊົນເປັນກົກ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ, ມີຄວາມອົດທົນ, ປະຢັດ, ຊື່ສັດ, ທ່ຽງທຳ, ບໍ່ອວດອົ່ງທະນົງຕົວ, ບໍ່ສວຍໃຊ້ອຳນາດ ເດັດດ່ຽວຕ້ານການສໍ້ລາດບັງຫຼວງ, ຕ້ານພະຍາດອາດຍາສິດ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດກົດໝາຍ;

3. ກຳແໜ້ນ ແລະ ຍຶດໝັ້ນແນວທາງປ່ຽນແປງໃໝ່, ລັດຖະທຳມະນູນ ແລະ ກົດໝາຍ; ຮູ້ໂຄສະນາ ແລະ ສຶກສາອົບຮົມປະຊາຊົນ, ເດັດດ່ຽວສູ້ຊົນເພື່ອບັນລຸເປົ້າໝາຍປະເທດຊາດ ມັ່ງຄັ່ງເຂັ້ມແຂງ, ປະຊາຊົນ ຮັ່ງມີ ຜາສຸກ, ສັງຄົມ ມີຄວາມສາມັກຄີ ປອງດອງ ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລ;

4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຄົ້ນຄວ້າ ມີຄຳເຫັນຕໍ່ບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ສາມາດປະຕິບັດໜ້າທີ່ຂອງຕົນໄດ້;

5. ມີລະດັບການສຶກສາຈົບຊັ້ນມັດທະຍົມຕອນຕົ້ນຂຶ້ນໄປ, ມີວິຊາສະເພາະໃດໜຶ່ງ;

6. ມີສຸຂະພາບດີ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮໍ່າຮຽນ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ;

2. ໂຄສະນາ, ເຜີຍແຜ່, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນ ໃຫ້ຮັບຮູ້, ເຂົ້າໃຈ, ເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນທ້ອງຖິ່ນ;

3. ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ; ໃນກໍລະນີທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຍ້ອນສາເຫດຈໍາເປັນໃດໜຶ່ງ ຕ້ອງສະເໜີຢ່າງເປັນລາຍລັກອັກສອນ ເພື່ອຂໍອະນຸຍາດ ຈາກປະທານຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

4. ຄົ້ນຄວ້າ ແລະ ກະກຽມເນື້ອໃນຕ່າງໆ ເພື່ອປະກອບຄໍາເຫັນໃນກອງປະຊຸມ ແລະ ລົງຄະແນນສຽງດ້ວຍຄວາມຮັບຜິດຊອບສູງ;

5. ຊັກຖາມ ປະທານ, ຄະນະປະຈໍາ ສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ບຸກຄະລາກອນອື່ນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ;

6. ໃກ້ຊິດຕິດແທດ, ພົບປະ, ຮັບຕ້ອນປະຊາຊົນ, ລາຍງານການເຄື່ອນໄຫວວຽກງານ ຕໍ່ປະຊາຊົນໃນເຂດເລືອກຕັ້ງຂອງຕົນ, ເກັບກໍາ ແລະ ນໍາເອົາຄວາມຄິດຄວາມເຫັນ ແລະ ຄໍາສະ ເໜີຂອງປະຊາຊົນ ເພື່ອສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງພິຈາລະນາ, ແກ້ໄຂ ທັງຕິດຕາມຜົນຂອງການແກ້ໄຂ;

7. ໃຫ້ຄໍາປຶກສາ ແລະ ຄໍາແນະນໍາແກ່ພົນລະເມືອງ ກ່ຽວກັບການຍື່ນຄໍາຮ້ອງທຸກ ແລະ ບັນຫາຕ່າງໆ ທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ;

8. ເຂົ້າຮ່ວມ ກອງປະຊຸມ, ການເຄື່ອນໄຫວ ແລະ ຂະບວນການຕ່າງໆ ເປັນຕົ້ນ ຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ, ວຽກງານສາມສ້າງ ໃນທ້ອງຖິ່ນ;

9. ໄດ້ຮັບຂໍ້ມູນ, ຂ່າວສານຕ່າງໆ ທີ່ຈໍາເປັນໃນການປະຕິບັດໜ້າທີ່ຂອງຕົນ;

10. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ຢ່າງເປັນລາຍລັກອັກສອນ ໃຫ້ຄະນະກໍາມະການສະພາປະຊາຊົນຂັ້ນແຂວງ ທີ່ຕົນສັງກັດ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ການສັງກັດ ແລະ ການຄວບຕຳແໜ່ງຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ແຕ່ລະທ່ານ ຕ້ອງສັງກັດຢູ່ໃນໜຶ່ງ ຫຼື ສອງຄະນະກຳມະການ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີທັງ ຜູ້ປະຈຳການ ແລະ ຜູ້ຄວບຕຳແໜ່ງ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 32 ນະໂຍບາຍຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຮັບນະໂຍບາຍສະເພາະ ເຊັ່ນ ເງິນອຸດໜູນ, ການກວດສຸຂະພາບ, ການປິ່ນປົວ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ອະພິສິດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກ ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາ ປະຊາຊົນຂັ້ນແຂວງ.

ຖ້າຫາກວ່າມີຄວາມຈຳເປັນ ຕ້ອງໄດ້ຈັບຕົວ, ກັກຕົວ ຫຼື ກັກຂັງ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ໄດ້ຈັບຕົວ, ກັກຕົວ ຫຼື ກັກຂັງ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕ້ອງລາຍງານໃນທັນທີໃຫ້ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

ໃນໄລຍະການສືບສວນ-ສອບສວນນັ້ນ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ຖືກດຳເນີນຄະດີ ຍັງມີສິດເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງໄດ້.

**ມາດຕາ 34 ການສິ້ນສຸດການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ**

ການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ໝົດອາຍຸການຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;
2. ລາອອກ ດ້ວຍເຫດຜົນຈຳເປັນ;
3. ຖືກປົດອອກຈາກການເປັນສະມາຊິກສະພາປະຊາຊົນຂັ້ນແຂວງ;
4. ເສຍຊີວິດ;
5. ມີການຍຸບ ສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ຄະນະປະຈຳສະພາປະຊາຊົນຂັ້ນແຂວງ

### ມາດຕາ 35 ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ມີພາລະບົດບາດປະຕິບັດສິດ ແລະ ໜ້າທີ່ແທນສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນເວລາສະພາປະຊາຊົນຂັ້ນແຂວງບໍ່ໄດ້ເປີດກອງປະຊຸມ.

### ມາດຕາ 36 ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານການສ້າງ ແລະ ປັບປຸງ ນິຕິກຳ:

1.1. ຄົ້ນຄວ້າການສ້າງ ແລະ ປັບປຸງນິຕິກຳ ເພື່ອນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຮັບຮອງເອົາ;

1.2. ຊີ້ນຳການໂຄສະນາ, ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ໂດຍປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງ;

1.3. ອອກມະຕິ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;

1.4. ສ້າງ ແລະ ສະເໜີກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາທິດທາງວຽກງານ ປະຈຳປີ ແລະ ປະຈຳ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:

2.1. ດ້ານການເມືອງ ແລະ ການປົກຄອງ:

2.1.1. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຮ່ວມກັບອົງການອຳນາດລັດຂັ້ນແຂວງ;

2.1.2. ພົວພັນຮ່ວມມື ກັບການຈັດຕັ້ງສະພາປະຊາຊົນທ້ອງຖິ່ນ ຂອງຕ່າງປະເທດ ຕາມການມອບໝາຍ;

2.1.3. ລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ ໃນລະຫວ່າງສອງກອງປະຊຸມ.

2.2 ດ້ານເສດຖະກິດ-ສັງຄົມ:

2.2.1. ຄົ້ນຄວ້າ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ ແລະ ບົດລາຍງານ ກ່ຽວກັບການຈັດຕັ້ງປະ ຕິບັດແຜນດັ່ງກ່າວ;

2.2.2. ສົມທົບກັບອົງການປົກຄອງຂັ້ນແຂວງ ສ້າງແຜນການຈັດເກັບລາຍຮັບ, ລາຍຈ່າຍປະຈຳປີ ຂອງທ້ອງຖິ່ນ ແລ້ວມອບໃຫ້ອົງການປົກຄອງຂັ້ນແຂວງ ສະເໜີຕໍ່ລັດຖະບານ;

2.2.3. ຄົ້ນຄວ້າ ແຜນການແບ່ງປັນງົບປະມານປະຈຳປີ ຂອງທ້ອງຖິ່ນ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2.2.4. ຄົ້ນຄວ້າ ການກຳນົດນະໂຍບາຍ ສົ່ງເສີມສະເພາະ ຫຼື ຍົກເວັ້ນພາສີ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2.2.5. ຄົ້ນຄວ້າແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນໃນທ້ອງຖິ່ນ.

2.2 ດ້ານການຈັດຕັ້ງ ແລະ ບຸກຄະລາກອນ:

2.3.1. ດ້ານການຈັດຕັ້ງ

2.3.1.1. ຄົ້ນຄວ້າ ໂຄງປະກອບ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງການຈັດຕັ້ງ ຂອງສະພາປະຊາຊົນຂັ້ນແຂວງ.

2.3.2. ດ້ານບຸກຄະລາກອນ

2.3.2.1. ສະເໜີເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ, ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

2.3.2.2. ສະເໜີເລືອກຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2.3.2.3. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການ ຂອງສະພາປະຊາຊົນຂັ້ນແຂວງ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ;

2.3.2.5. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ;

2.3.2.6. ບັນຈຸ, ສັບຊ້ອນ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຂົ້າໃນຄະນະກຳມະການຕ່າງໆ;

2.3.2.7. ພິຈາລະນາ ການຍົກຍ້າຍ, ການແຕ່ງຕັ້ງ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ປະຈຳການໄປຮັບຜິດຊອບວຽກງານອື່ນ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ;

2.3.2.8. ພິຈາລະນາ, ຮັບຮອງເອົາການສະເໜີ ຂອງປະທານສານປະຊາຊົນຂັ້ນແຂວງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານ ປະຊາຊົນຂັ້ນແຂວງ ແລະ ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ.

3. ດ້ານການຕິດຕາມກວດກາ:

3.1. ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ໃນທ້ອງຖິ່ນຕົນ;

3.2. ຕິດຕາມກວດກາ ການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນ, ສານປະຊາຊົນ ຂັ້ນແຂວງ ແລະ ອົງການກວດສອບປະຈຳພາກ;

3.3. ໂຈະ ການຈັດຕັ້ງປະຕິບັດ ນິຕິກຳຂອງອົງການລັດຂັ້ນແຂວງ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3.4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 37 ໂຄງປະກອບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະກອບດ້ວຍ:

1.ປະທານ;

2. ຮອງປະທານ;

3. ກຳມະການ;

4. ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ.

ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ ເປັນທັງ ປະທານ ແລະ ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 38 ການແບ່ງຄວາມຮັບຜິດຊອບ ພາຍໃນຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮັບຜິດຊອບລວມ, ຊີ້ນຳ, ນຳພາວຽກງານ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະມອບໝາຍໃຫ້ຮອງປະທານ ຫຼື ກຳມະການຄະນະປະຈຳ ທ່ານໃດໜຶ່ງ ເຮັດໜ້າທີ່ແທນ ໃນເວລາປະທານຕິດຂັດ.

ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກຳມະການຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊ່ວຍ ປະທານ ແລະ ຮອງປະທານໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ ຫຼື ຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 39 ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ**

ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ມີໜ່ວຍງານສະມາຊິກສະພາປະຊາຊົນ ເພດຍິງ ຂັ້ນແຂວງ.

ໃນກໍລະນີທີ່ມີຄວາມຈຳເປັນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະສ້າງຕັ້ງກົງຈັກອື່ນຂຶ້ນອີກກໍໄດ້.

## ໝວດທີ 3
## ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ

**ມາດຕາ 40 ປະທານສະພາປະຊາຊົນຂັ້ນແຂວງ**

ປະທານສະພາປະຊາຊົນຂັ້ນແຂວງ ແມ່ນ ຫົວໜ້າສູງສຸດຂອງສະພາປະຊາຊົນຂັ້ນແຂວງ ເປັນຜູ້ຊີ້ນໍາ ແລະ ນໍາພາວຽກງານຂອງສະພາປະຊາຊົນຂັ້ນແຂວງ ທັງເປັນຜູ້ຕາງໜ້າສະພາປະຊາຊົນຂັ້ນແຂວງ ໃນການພົວພັນວຽກງານພາຍໃນ ແລະ ຕ່າງປະເທດ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງປະທານສະພາປະຊາຊົນຂັ້ນແຂວງ**

ປະທານສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນປະທານຄະນະປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ, ປະທານກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;
2. ຊີ້ນໍາ, ນໍາພາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ຄະນະກໍາມະການ, ຄະນະເລຂາທິການຂອງສະພາປະຊາຊົນ ຂັ້ນແຂວງ ແລະ ກົງຈັກທີ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງສ້າງຕັ້ງ;
3. ປຶກສາຫາລື, ປະສານສົມທົບວຽກງານສໍາຄັນຂອງທ້ອງຖິ່ນ ກັບ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 ຮອງປະທານສະພາປະຊາຊົນຂັ້ນແຂວງ**

ຮອງປະທານສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຊ່ວຍປະທານສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ຮັບຜິດຊອບວຽກງານໃດໜຶ່ງ, ເປັນຜູ້ວ່າການແທນ, ເປັນປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕາມການມອບໝາຍ ຂອງປະທານສະພາປະຊາຊົນຂັ້ນແຂວງ.

ຮອງປະທານສະພາປະຊາຊົນຂັ້ນແຂວງ ເປັນຄະນະປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ໝວດທີ 4
## ຄະນະກໍາມະການ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 43 ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະກໍາມະການສະພາປະຊາຊົນຂັ້ນແຂວງ**

ຄະນະກໍາມະການສະພາປະຊາຊົນຂັ້ນແຂວງ ແມ່ນ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ, ປະກອບດ້ວຍ ບັນດາສະມາຊິກສະພາປະຊາຊົນຂັ້ນແຂວງ, ມີພາລະບົດບາດເປັນເສນາທິ

ການ ໃຫ້ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດ ສິດ ແລະ ໜ້າທີ່ລວມ ຂອງຄະນະກຳມະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະບຽບການສະເພາະຂອງແຕ່ລະຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 44 ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ;
3. ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

ໃນກໍລະນີຈຳເປັນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອສ້າງຕັ້ງຄະນະກຳມະການອື່ນ ຕື່ມອີກກໍໄດ້.

**ມາດຕາ 45 ສິດ ແລະ ໜ້າທີ່ ລວມຂອງຄະນະກຳມະການ**

ຄະນະກຳມະການ ມີ ສິດ ແລະ ໜ້າທີ່ລວມ ໃນການປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ;
2. ຄົ້ນຄວ້າ, ກວດກາ ແລະ ປະກອບຄວາມເຫັນໃສ່ຮ່າງນິຕິກຳ ຂອງອົງການລັດຂັ້ນແຂວງ;
3. ເຂົ້າຮ່ວມແຕ່ທິວທີ ກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄວາມເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ;
4. ຄົ້ນຄວ້າການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລຶບລ້າງ ນິຕິກຳ ຂອງອົງການລັດຂັ້ນແຂວງ ແລ້ວນຳສະເໜີຕໍ່ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
5. ຄົ້ນຄວ້າ ແລະ ສະເໜີບັນຫາສຳຄັນ ທີ່ມີຄວາມຫຍຸ້ງຍາກ ພາຍໃນທ້ອງຖິ່ນ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ;
6. ຮັບຕ້ອນ ແລະ ຟັງຄຳຄິດຄຳເຫັນຂອງປະຊາຊົນ ກ່ຽວກັບບັນຫາຕ່າງໆ;
7. ປະສານສົມທົບ ລະຫວ່າງຄະນະກຳມະການດ້ວຍກັນ ຫຼື ກັບອົງການລັດຂັ້ນແຂວງ ຕາມພາລະບົດບາດຂອງຕົນ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ຫຼື ຕາມການມອບໝາຍຂອງປະທານ ຫຼື ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 46 ສິດ ແລະ ໜ້າທີ່ ສະເພາະຂອງແຕ່ລະຄະນະກຳມະການ**

ສິດ ແລະ ໜ້າທີ່ສະເພາະ ຂອງແຕ່ລະຄະນະກຳມະການ ແມ່ນຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດ.

**ມາດຕາ 47 ໂຄງປະກອບຂອງຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ**

ໂຄງປະກອບຂອງຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ປະທານ;
2. ຮອງປະທານ;
3. ກຳມະການ ສັງກັດຄະນະກຳມະການ;
4. ຂະແໜງຊ່ວຍວຽກ.

**ມາດຕາ 48 ການແບ່ງຄວາມຮັບຜິດຊອບ ພາຍໃນຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮັບຜິດຊອບລວມ, ຊີ້ນຳ, ນຳພາວຽກງານ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມອບໝາຍໃຫ້ ຮອງປະທານ ທ່ານໃດໜຶ່ງ ເຮັດໜ້າທີ່ແທນ ໃນເວລາປະທານຕິດຂັດ.

ຮອງປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

## ໝວດທີ 5
## ຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 49 ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ**

ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ແມ່ນ ກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ, ມີພາລະບົດບາດ ເປັນເສນາທິການໃຫ້ ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ**

ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານການຄົ້ນຄວ້າ-ສັງລວມເນື້ອໃນ

1.1. ສໍາລັບສະພາປະຊາຊົນຂັ້ນແຂວງ:

1.1.1 ຄົ້ນຄວ້າສ້າງຮ່າງແຜນການ ແລະ ສະຫຼຸບການເຄື່ອນໄຫວວຽກງານ ປະຈໍາ ຫ້າປີ, ປະຈໍາ ໜຶ່ງປີ ແລະ ປະຈໍາ ຫົກເດືອນ;

1.1.2 ຄົ້ນຄວ້າ ສ້າງຮ່າງແຜນການ, ຕາຕະລາງ, ແຜນບັນຊາ, ຮ່າງບົດກ່າວເປີດ, ກ່າວປິດ, ຮ່າງບົດລາຍງານຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ຮ່າງມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ເອກະສານອື່ນ ເພື່ອຮັບໃຊ້ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

1.1.3. ສັງລວມ ຂໍ້ຊັກຖາມຂອງສະມາຊິກສະພາປະຊາຊົນຂັ້ນແຂວງ, ການຊີ້ແຈງຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ບັນທຶກກອງປະຊຸມ ແລ້ວລາຍງານ ໃຫ້ປະທານກອງປະຊຸມ;

1.1.4. ສະເໜີຮ່າງມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ກອງປະຊຸມພິຈາລະນາຮັບຮອງເອົາ;

1.1.5. ສັງລວມເນື້ອໃນໂທລະສັບສາຍດ່ວນ ແລ້ວນໍາສະເໜີຄະນະປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອມອບໃຫ້ຄະນະກໍາມະການທີ່ກ່ຽວຂ້ອງ ສົມທົບກັບຂະແໜງການພິຈາລະນາແກ້ໄຂ.

1.1.6. ຮ່າງບົດສະຫຼຸບລາຍງານຜົນສໍາເລັດຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ.

1.2. ສໍາລັບຄະນະປະຈໍາສະພາປະຊາຊົນຂັ້ນແຂວງ:

1.2.1. ຄົ້ນຄວ້າ ສ້າງຮ່າງແຜນການ, ຕາຕະລາງ ແລະ ເອກະສານອື່ນ ເພື່ອຮັບໃຊ້ກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

1.2.2. ສັງລວມຄໍາເຫັນ ຂອງກໍາມະການຄະນະປະຈໍາ ສະພາປະຊາຊົນຂັ້ນແຂວງ ແລະ ບັນທຶກກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

1.2.3. ຮ່າງຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

1.2.4. ຮ່າງຄໍາແນະນໍາຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຜັນຂະຫຍາຍຜົນສໍາເລັດຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ;

1.2.5. ສ້າງແຜນການ ແລະ ສະຫຼຸບຕີລາຄາການເຄື່ອນໄຫວວຽກງານ ປະຈໍາເດືອນ, ປະຈໍາ ຫົກເດືອນ ແລະ ປະຈໍາປີ ຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ.

1.3. ສໍາລັບຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ:

1.3.1. ຄົ້ນຄວ້າ ສ້າງຮ່າງແຜນການ, ສະຫຼຸບຕີລາຄາການເຄື່ອນໄຫວວຽກງານ ປະຈໍາເດືອນ, ປະຈໍາ ຫົກເດືອນ ແລະ ປະຈໍາປີ ຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ;

1.3.2. ສັງລວມຄຳເຫັນ ແລະ ບັນທຶກ ກອງປະຊຸມປຶກສາຫາລືວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

1.3.3. ຮ່າງແຜນການຈັດຕັ້ງປະຕິບັດ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຂອງຄະນະສະມາຊິກ ສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

2. ດ້ານການຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ:

2.1.ຂຶ້ນແຜນການ, ງົບປະມານຂອງສະພາປະຊາຊົນຂັ້ນແຂວງ ເພື່ອຜ່ານກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ;

2.2.ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະກຳມະການ, ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

2.3.ສ້າງແຜນການ ບຳລຸງ ສ້າງ, ຍົກລະດັບ ແລະ ປະຕິບັດນະໂຍບາຍຕໍ່ ພະນັກງານ-ລັດຖະກອນ ຂອງສະພາປະຊາຊົນຂັ້ນແຂວງ;

2.4.ຈັດຕັ້ງ, ນຳພາ, ຄຸ້ມຄອງ ພະນັກງານ-ລັດຖະກອນ, ຄຸ້ມຄອງການນຳໃຊ້ງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ຊັບສິນອື່ນ ຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

2.5.ປົກປັກຮັກສາ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນສຳນັກງານສະພາປະຊາຊົນຂັ້ນແຂວງ;

2.6.ຈັດຕັ້ງ ກອງປະຊຸມ, ສຳມະນາ ເພື່ອຍົກລະດັບ ແລະ ລະດົມຄວາມຄິດເຫັນ ຕໍ່ບັນຫາໃດໜຶ່ງ ທີ່ຢູ່ໃນຂອບເຂດວຽກງານຂອງຕົນ;

2.7.ອອກແຈ້ງການ ແລະ ຄຳແນະນຳ ໃນການຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ;

2.8.ຊີ້ນຳ ວຽກງານຄຸ້ມຄອງ ບໍລິຫານ, ແຜນການ ແລະ ການເງິນ ຂອງຂະແໜງ ແລະ ການຈັດຕັ້ງອື່ນ ພາຍໃນສະພາປະຊາຊົນຂັ້ນແຂວງ;

2.9. ພົວພັນ ແລະ ປະສານສົມທົບ ກັບຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ກ່ຽວກັບວຽກງານຄຸ້ມຄອງ ບໍລິຫານ, ແຜນການ ແລະ ການເງິນ;

2.10.ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

2.11.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 51 ໂຄງປະກອບຂອງຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ**

ໂຄງປະກອບຂອງຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ເລຂາທິການ;
2. ຮອງເລຂາທິການ;
3. ຂະແໜງ ຊ່ວຍວຽກ.

**ມາດຕາ 52 ເລຂາທິການສະພາປະຊາຊົນຂັ້ນແຂວງ**

ເລຂາທິການສະພາປະຊາຊົນຂັ້ນແຂວງ ແມ່ນ ຫົວໜ້າຄະນະເລຂາທິການສະພາປະຊາ ຊົນ ຂັ້ນແຂວງ ເປັນຜູ້ຊີ້ນໍາວຽກງານຄົ້ນຄວ້າ-ສັງລວມເນື້ອໃນ ແລະ ວຽກງານຄຸ້ມຄອງ ບໍລິຫານ, ແຜນການ ແລະ ການເງິນ ທັງເປັນຫົວໜ້າຫ້ອງວ່າການ ແລະ ໂຄສົກຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງເລຂາທິການສະພາປະຊາຊົນຂັ້ນແຂວງ**

ເລຂາທິການສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນໍາ-ນໍາພາລວມ, ລົງເລິກດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງຂອງ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ;

2. ຊີ້ນໍາການຄົ້ນຄວ້າ ສ້າງແຜນການ ທິດທາງວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ໃນແຕ່ລະໄລຍະ;

3. ຕິດຕາມກວດກາ, ຊຸກຍູ້, ແນະນໍາການຈັດຕັ້ງປະຕິບັດແຜນການ ແລະ ວຽກງານຕ່າງໆ ພາຍໃນຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ;

4. ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ກອງປະຊຸມອື່ນ;

5. ສະເໜີຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາລະບຽບການດໍາເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ;

6. ສະເໜີຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາການປັບປຸງ, ດັດແປງ ແລະ ແກ້ໄຂ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ທີ່ເຫັນວ່າມີຄວາມຈໍາເປັນ;

7. ສະເໜີຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ພິຈາລະນາແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າ, ຮອງຫົວໜ້າຂະແໜງ ຊ່ວຍວຽກ ແລະ ໜ່ວຍງານ ພາຍໃນສະພາປະຊາຊົນຂັ້ນແຂວງ;

8. ຮຽກໂຮມ ແລະ ເປັນປະທານກອງປະຊຸມວຽກງານຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ແລະ ຮັບສ່ອງແສງລາຍງານຂອງຂະແໜງຊ່ວຍວຽກ ແລະ ໜ່ວຍງານ ພາຍໃນສະພາປະຊາຊົນ ຂັ້ນແຂວງ;

9. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຂອງ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ;

10. ພົວພັນ, ປະສານງານກັບຄະນະກຳມະການ ພາຍໃນສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ;

11. ພົວພັນ, ຮ່ວມມືກັບການຈັດຕັ້ງລັດຖະສະພາ ແລະ ອົງການຈັດຕັ້ງຕ່າງປະເທດ ຕາມການມອບໝາຍ;

12. ລາຍງານການເຄື່ອນໄຫວວຽກງານ ຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍຂອງປະທານສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 54 ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ**

ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ ເປັນຜູ້ຊ່ວຍເລຂາທິການ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຄະນະເລຂາທິການ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງເລຂາທິການ.

ໃນກໍລະນີທີ່ເລຂາທິການຕິດຂັດ ແມ່ນ ຮອງເລຂາທິການຜູ້ທີ່ຖືກມອບໝາຍຈາກເລຂາທິການເປັນຜູ້ວ່າການແທນ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງຂະແໜງຊ່ວຍວຽກ**

ສິດ ແລະ ໜ້າທີ່ຂອງຂະແໜງຊ່ວຍວຽກ ຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ກອງປະຊຸມ
### ໝວດທີ 1
### ກອງປະຊຸມສະພາປະຊາຊົນຂັ້ນແຂວງ

**ມາດຕາ 56 ກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີກອງປະຊຸມ ສາມ ປະເພດ ດັ່ງນີ້:

1. ກອງປະຊຸມຄັ້ງປະຖົມມະລຶກ;
2. ກອງປະຊຸມສະໄໝສາມັນ;
3. ກອງປະຊຸມສະໄໝວິສາມັນ.

**ມາດຕາ 57 ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ ເປີດຂຶ້ນຢ່າງຊ້າ ສາມສິບວັນ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຶ່ງແມ່ນປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ຫຼື ປະທານສະພາປະຊາຊົນຂັ້ນແຂວງ ຊຸດເກົ່າ ເປັນປະທານ ແລະ ຊີ້ນຳກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາປະຊາຊົນຂັ້ນແຂວງ ຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບຜົນຂອງການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ເລືອກຕັ້ງ ປະທານ ສະພາປະຊາຊົນຂັ້ນແຂວງ ຕາມການສະເໜີ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸດເກົ່າ;

3. ເລືອກຕັ້ງ ຮອງປະທານ ແລະ ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີ ຂອງປະທານສະພາປະຊາຊົນຂັ້ນແຂວງ;

4. ເລືອກຕັ້ງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

5. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

6. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ຕາມການສະເໜີຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

7. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ໂຄງປະກອບກົງຈັກ ຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີ ຂອງຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ;

8. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບໂຄງປະກອບກົງຈັກ ຂອງອົງການປົກຄອງຂັ້ນແຂວງ; ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

9. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຫ້າປີ ຂັ້ນແຂວງ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງ ນະຄອນຫຼວງ;

10. ພິຈາລະນາ, ຮັບຮອງເອົາ ແຜນການ ຫ້າປີ ກ່ຽວກັບແຜນດຳເນີນງານຂອງສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

11. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ.

## ມາດຕາ 58 ກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ ແຕ່ໃຫ້ເປີດພາຍຫຼັງກອງປະຊຸມສະພາແຫ່ງຊາດ ໂດຍແມ່ນຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮຽກໂຮມ.

## ມາດຕາ 59 ກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີຕໍ່ໜ້າ;
2. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ;
3. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງສະພາປະຊາຊົນຂັ້ນແຂວງ;
4. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳ ທີ່ສຳຄັນ ຂັ້ນແຂວງ;
5. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ;
6. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສຳຄັນ;
7. ມອບສິດ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ມາດຕາ 60 ກອງປະຊຸມສະໄໝສາມັນເທື່ອທີສອງ ຂອງສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະໄໝສາມັນເທື່ອທີສອງ ຂອງສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ການສ້າງ ແລະ ປັບປຸງນິຕິກຳ ທີ່ສຳຄັນ ຂັ້ນແຂວງ;
2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ທີ່ກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂັ້ນແຂວງ ທີ່ກເດືອນທ້າຍປີ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ໃນລະຫວ່າງສອງກອງປະຊຸມ;

4. ຮັບຟັງການລາຍງານ ຂອງຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

5. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ;

6. ຊັກຖາມ ຄະນະປະຈໍາ, ປະທານ, ຮອງປະທານຄະນະກໍາມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນຂັ້ນແຂວງ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສໍາຄັນພື້ນຖານຂອງທ້ອງຖິ່ນ ແລະ ວຽກງານອື່ນທີ່ສໍາຄັນ;

8. ມອບສິດ ໃຫ້ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕົກລົງວຽກງານທີ່ຈໍາເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

### ມາດຕາ 61 ກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນຂັ້ນແຂວງ ແມ່ນ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ທີ່ເປີດຂຶ້ນໃນລະຫວ່າງສອງກອງປະຊຸມສະໄໝສາມັນ ຕາມການຕົກລົງຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຫຼື ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ສະມາຊິກສະພາປະຊາຊົນຂັ້ນແຂວງ ຢ່າງໜ້ອຍໜຶ່ງສ່ວນສີ່ ຂອງຈໍານວນສະມາຊິກທັງໝົດ ເພື່ອພິຈາລະນາ, ຕົກລົງບັນຫາທີ່ສໍາຄັນ ແລະ ຮີບດ່ວນ.

### ມາດຕາ 62 ຫຼັກການດໍາເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະດໍາເນີນໄດ້ກໍຕໍ່ເມື່ອມີສະມາຊິກສະພາປະຊາຊົນຂັ້ນແຂວງເຂົ້າຮ່ວມ ຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສະມາຊິກ ສະພາປະຊາຊົນຂັ້ນແຂວງທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ດໍາເນີນຢ່າງເປີດເຜີຍ ພາຍໃຕ້ການຄວບຄຸມ ແລະ ຊີ້ນໍາຂອງ ປະທານ ຫຼື ຮອງປະທານ ຜູ້ໄດ້ຮັບມອບໝາຍ ຈາກປະທານສະພາປະຊາຊົນຂັ້ນແຂວງ.

ໃນກໍລະນີຈໍາເປັນ ສະພາປະຊາຊົນຂັ້ນແຂວງ ອາດຈະດໍາເນີນກອງປະຊຸມສະເພາະ ພາຍໃນຂອງຕົນກໍໄດ້ ຕາມການສະເໜີຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ໜຶ່ງສ່ວນສີ່ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງກອງເລຂານຸການ ເປັນຜູ້ຊ່ວຍວຽກ.

### ມາດຕາ 63 ການຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ເອກະສານ ທີ່ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕ້ອງສົ່ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

### ມາດຕາ 64 ຜູ້ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ

ຜູ້ເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ມີ ສະມາຊິກສະພາປະຊາຊົນ ຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ, ປະທານອົງການກວດສອບ ປະຈຳພາກ, ຜູ້ຕາງໜ້າອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ, ນອກຈາກນີ້ ອາດຈະເຊີນ ອົງການຈັດຕັ້ງສັງຄົມ, ຕົວແທນຊັ້ນຄົນຕ່າງໆ ແລະ ຕົວແທນອົງການຈັດຕັ້ງຕ່າງ ປະເທດ ຢູ່ແຂວງ, ນະຄອນຫຼວງເຂົ້າຮ່ວມ.

ສຳລັບ ຜູ້ເຂົ້າຮ່ວມ ທີ່ບໍ່ແມ່ນສະມາຊິກສະພາປະຊາຊົນຂັ້ນແຂວງນັ້ນ ອາດຈະໄດ້ຮັບອະນຸຍາດ ຈາກປະທານກອງປະຊຸມໃຫ້ປະກອບຄວາມຄິດຄວາມເຫັນໃນກອງປະຊຸມ ແຕ່ຫາກບໍ່ມີສິດລົງຄະແນນສຽງ.

ສຳລັບ ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ, ປະທານອົງການກວດສອບ ປະຈຳພາກ ຕ້ອງເຂົ້າຮ່ວມຕະຫຼອດວາລະກອງປະຊຸມ.

ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ກ່ຽວຂ້ອງຕ້ອງປະຕິບັດຕາມລະບຽບການ ແລະ ວາລະຂອງກອງປະຊຸມ ທີ່ໄດ້ວາງອອກຢ່າງເຂັ້ມງວດ.

### ມາດຕາ 65 ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ

ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ເປັນນິຕິກຳປະເພດໜຶ່ງ ທີ່ມີຜົນບັງຄັບໃຊ້ທົ່ວທ້ອງຖິ່ນ ຊຶ່ງສັງລວມບັນຫາສຳຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ.

ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຖືກຮັບຮອງເອົາດ້ວຍການລົງຄະແນນສຽງຢ່າງເປີດເຜີຍ ຫຼື ປິດລັບ ຕາມການຕົກລົງຂອງກອງປະຊຸມ.

ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍ ກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

### ມາດຕາ 66 ບົດບັນທຶກຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແຕ່ລະເທື່ອ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຢັ້ງຢືນຂອງຫົວໜ້າກອງເລຂານຸການ ແລະ ປະທານກອງປະຊຸມສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ກອງປະຊຸມຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ

### ມາດຕາ 67 ກອງປະຊຸມຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຮຽກໂຮມ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອາດຈະເປີດກວ້າງ ໂດຍເຊີນບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ກ່ຽວຂ້ອງ ເຂົ້າຮ່ວມນຳກໍໄດ້ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ. ບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ມີສິດອອກຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີທີ່ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຂັດ ແມ່ນ ຮອງປະທານຜູ້ທີ່ຖືກມອບໝາຍ ຈາກປະທານນັ້ນ ເປັນຜູ້ຮຽກໂຮມ ແລະ ນຳພາກອງປະຊຸມ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີກຳມະການຢ່າງໜ້ອຍ ສອງສ່ວນສາມເຂົ້າຮ່ວມ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປີດກອງປະຊຸມຮ່ວມກັບອົງການປົກຄອງທ້ອງຖິ່ນ, ອົງການຍຸຕິທຳ ແລະ ກົດໝາຍ ຂັ້ນແຂວງ ແລະ ອົງການກວດສອບປະຈຳພາກ ຢ່າງໜ້ອຍ ປີລະເທື່ອ.

### ມາດຕາ 68 ເນື້ອໃນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ເນື້ອໃນທີ່ຈະນຳມາພິຈາລະນາ ຢູ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕ້ອງເປັນບັນຫາສຳຄັນ, ມີຈຸດສຸມ ຕິດພັນກັບມະຕິ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ ໃນເວລາບໍ່ເປີດກອງປະຊຸມ.

ເນື້ອໃນຂອງກອງປະຊຸມ ຕ້ອງແຈ້ງ ແລະ ສົ່ງໃຫ້ກຳມະການຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລວມທັງແຂກທີ່ຖືກເຊີນ ຊາບລ່ວງໜ້າຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

### ມາດຕາ 69 ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ບັນຫາສຳຄັນຕ່າງໆ ທີ່ນຳມາພິຈາລະນາ ໃນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕ້ອງມີມະຕິ.

ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນຂອງກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງຊາບ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານສື່ມວນຊົນ ຕາມແຕ່ລະກໍລະນີ.

**ມາດຕາ 70 ບົດບັນທຶກຂອງກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ລະເທື່ອ ຕ້ອງມີບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງເລຂາທິການ ສະພາປະຊາຊົນ ຂັ້ນແຂວງ.

## ໝວດທີ 3
## ກອງປະຊຸມຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 71 ກອງປະຊຸມຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ ມີ ສອງ ປະເພດ ດັ່ງນີ້:

1. ກອງປະຊຸມຄະນະກຳມະການ;
2. ກອງປະຊຸມຄົບຄະນະ ຂອງຄະນະກຳມະການ.

**ມາດຕາ 72 ກອງປະຊຸມຄະນະກຳມະການ**

ກອງປະຊຸມຄະນະກຳມະການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍ ເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການເປັນຜູ້ຮຽກໂຮມ ແລະເປັນປະທານກອງປະຊຸມ ຊຶ່ງມີຮອງປະທານ, ກຳມະການປະຈຳຄະນະກຳມະການ, ຂະແໜງຊ່ວຍວຽກ ແລະ ໜ່ວຍງານເຂົ້າຮ່ວມ.

ກອງປະຊຸມຄະນະກຳມະການ ມີ ເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າ ຂອງກຳມະການ;

2. ຄົ້ນຄວ້າ ສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງຄະນະກຳມະການຕົນ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາຄະນະກຳມະການອື່ນ ຫຼື ຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

3. ປຶກສາຫາລື ການປະຕິບັດວຽກງານຕົວຈິງ ເປັນຕົ້ນ ເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາໃນຂົງເຂດ ທີ່ຄະນະກຳມະການຮັບຜິດຊອບ;

4. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາທີ່ພົ້ນເດັ່ນ ທີ່ພົວພັນກັບຄະນະກຳມະການຕົນ ແລະ ສະເໜີ ມາດຕະການແກ້ໄຂ ເພື່ອລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;

5. ຮັບຟັງການລາຍງານຂອງພະແນກ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດ ຄຳເຫັນ, ໃຫ້ຄຳແນະນຳ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;

6. ກະກຽມກອງປະຊຸມຄົບຄະນະຂອງຄະນະກຳມະການ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແລະ ວຽກງານອື່ນ ທີ່ຈຳເປັນ;

7. ຄົ້ນຄວ້າ, ພິຈາລະນາ ການບຳລຸງສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງພະນັກງານ ຂອງຂະແໜງຊ່ວຍວຽກ ແລະ ໜ່ວຍງານ ຕາມການສະເໜີ ຂອງຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ;

8. ມີເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

## ມາດຕາ 73 ກອງປະຊຸມຄົບຄະນະຂອງຄະນະກຳມະການ

ກອງປະຊຸມຄົບຄະນະຂອງຄະນະກຳມະການ ແມ່ນ ກອງປະຊຸມປຶກສາຫາລືວຽກງານ ປະຈຳປີທີ່ເປີດຂຶ້ນ ຢ່າງໜ້ອຍ ປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງ ປະທານຄະນະກຳມະການທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຶ່ງມີກຳມະການສັງກັດຄະນະກຳມະການ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງ ຈຳນວນກຳມະການທັງໝົດ.

ກອງປະຊຸມຄົບຄະນະຂອງຄະນະກຳມະການໃດໜຶ່ງ ຈະເປີດຂຶ້ນໃນເວລາໃດກໍໄດ້ ຫຼື ຈະເປີດຮ່ວມກັບຄະນະກຳມະການອື່ນ ແລະ ເຊີນບຸກຄົນ, ຄະນະກຳມະການອື່ນ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍໄດ້ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄົບຄະນະຂອງຄະນະກຳມະການ ພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນໄຫວວຽກງານໃນປີຜ່ານມາ ແລະ ທິດທາງແຜນການວຽກງານ ໃນປີຕໍ່ໜ້າຂອງຄະນະກຳມະການ, ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳ ແລະ ວຽກງານອື່ນ ໃນຂົງເຂດທີ່ຕົນຮັບຜິດຊອບ.

## ມາດຕາ 74 ມະຕິຂອງກອງປະຊຸມຄົບຄະນະຂອງຄະນະກຳມະການ

ບັນຫາສຳຄັນຕ່າງໆ ທີ່ນຳມາພິຈາລະນາໃນກອງປະຊຸມຄົບຄະນະຂອງຄະນະກຳມະການ ຕ້ອງມີມະຕິ.

ມະຕິຂອງກອງປະຊຸມຄົບຄະນະຂອງຄະນະກຳມະການ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍ ກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນຂອງກອງປະຊຸມ ຕ້ອງລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ແຈ້ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງຊາບ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານສື່ມວນຊົນ ຕາມແຕ່ລະກໍລະນີ.

## ມາດຕາ 75 ບົດບັນທຶກຂອງກອງປະຊຸມຄົບຄະນະ ຂອງຄະນະກຳມະການ

ກອງປະຊຸມຄົບຄະນະຂອງ ຄະນະກຳມະການ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ.

## ໝວດທີ 4
## ກອງປະຊຸມຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 76 ກອງປະຊຸມຄະນະເລຂາທິການ ສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ມີ ສອງ ປະເພດ ດັ່ງນີ້:

1. ກອງປະຊຸມປະຈຳເດືອນ ຄະນະເລຂາທິການ;
2. ກອງປະຊຸມວຽກງານ ຄະນະເລຂາທິການ.

**ມາດຕາ 77 ກອງປະຊຸມປະຈຳເດືອນຄະນະເລຂາທິການ**

ກອງປະຊຸມປະຈຳເດືອນຄະນະເລຂາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍ ເດືອນລະເທື່ອ ໂດຍແມ່ນເລຂາທິການເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີຮອງເລຂາທິການ, ຫົວໜ້າຂະແໜງຊ່ວຍວຽກ ແລະ ຫົວໜ້າໜ່ວຍງານ ເຂົ້າຮ່ວມ.

ກອງປະຊຸມປະຈຳເດືອນ ຄະນະເລຂາທິການ ມີ ເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳເດືອນຜ່ານມາ ແລະ ແຜນການວຽກງານປະຈຳເດືອນຕໍ່ໜ້າ ຂອງຄະນະເລຂາທິການ;
2. ຄົ້ນຄວ້າ ສ້າງຮ່າງນິຕິກຳ ທີ່ພົວພັນກັບວຽກງານຂອງຄະນະເລຂາທິການ;
3. ຮັບການສ່ອງແສງຂອງຂະແໜງຊ່ວຍວຽກ ແລະ ໜ່ວຍງານ ພາຍໃນສະພາປະຊາຊົນຂັ້ນແຂວງ;
4. ປຶກສາຫາລື ການປະຕິບັດວຽກງານຄົ້ນຄວ້າ-ສັງລວມເນື້ອໃນ ແລະ ວຽກງານຄຸ້ມຄອງບໍລິຫານ, ແຜນການ ແລະ ການເງິນ;
5. ກະກຽມກອງປະຊຸມວຽກງານຄະນະເລຂາທິການ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ວຽກງານອື່ນ ທີ່ຈຳເປັນ;
6. ຄົ້ນຄວ້າ, ພິຈາລະນາ ການບຳລຸງ ສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງ ພະນັກງານ ຂອງຂະແໜງຊ່ວຍວຽກ ແລະ ໜ່ວຍງານ;
7. ມີເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

**ມາດຕາ 78 ກອງປະຊຸມວຽກງານຄະນະເລຂາທິການ**

ກອງປະຊຸມວຽກງານຄະນະເລຂາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານປະຈຳສາມເດືອນ, ປະຈຳ ຫົກເດືອນ ແລະ ປະຈຳປີ ໂດຍການຮຽກໂຮມ ແລະ ການເປັນປະທານຂອງເລຂາທິການ ສະພາປະຊາຊົນຂັ້ນແຂວງ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຶ່ງມີ ຮອງເລຂາທິການ, ຫົວໜ້າຂະແໜງຊ່ວຍວຽກ, ຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການທັງໝົດ ເຂົ້າຮ່ວມ.

ກອງປະຊຸມວຽກງານຄະນະເລຂາທິການ ພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ ຂອງ ຄະນະເລຂາທິການ ແລະ ວຽກງານອື່ນ ໃນຂົງເຂດທີ່ຕົນຮັບຜິດຊອບ.

**ມາດຕາ 79 ບົດບັນທຶກຂອງກອງປະຊຸມວຽກງານຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມວຽກງານຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຕ້ອງເຮັດບົດບັນທຶກໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ.

ຜົນຂອງກອງປະຊຸມ ຕ້ອງລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຈ້ງໃຫ້ຄະນະກຳມະການ ແລະ ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ. ສຳລັບຜົນຂອງກອງປະຊຸມວຽກງານຄະນະເລຂາທິການ ຍັງຕ້ອງແຈ້ງໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງຊາບ.

## ພາກທີ V
## ລະບອບວິທີເຮັດວຽກ
### ໝວດທີ 1
### ລະບອບວິທີເຮັດວຽກ

**ມາດຕາ 80 ລະບອບເຮັດວຽກ**

ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເຮັດວຽກຕາມຫຼັກການລວມສູນ ປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 81 ວິທີເຮັດວຽກ**

ວິທີເຮັດວຽກຂອງສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ກົງຈັກຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດຳເນີນດ້ວຍລະບອບປະຊຸມ, ມີການແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການ, ການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆພາຍໃນສະພາປະຊາຊົນຂັ້ນແຂວງ ແລະ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບການຈັດຕັ້ງ ລັດຖະສະພາຂອງຕ່າງປະເທດ.

## ໝວດທີ 2
## ການພົວພັນລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບອົງການອື່ນຂອງລັດ

**ມາດຕາ 82 ການພົວພັນລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບສະພາແຫ່ງຊາດ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບສະພາແຫ່ງຊາດ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການທາບທາມປະກອບຄຳເຫັນ ຕໍ່ການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນ;
2. ການເຂົ້າຮ່ວມຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ຢູ່ທ້ອງຖິ່ນ;
3. ການປະກອບຄຳເຫັນ ຕໍ່ບັນຫາສຳຄັນ ທີ່ຕິດພັນກັບທ້ອງຖິ່ນ;
4. ການສະເໜີ ບຳລຸງ ສ້າງ, ຍົກລະດັບ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານວິຊາການ ຂອງສະພາປະຊາຊົນຂັ້ນແຂວງ;
5. ການຂໍທິດຊີ້ນຳ ກ່ຽວກັບບັນຫາສຳຄັນອື່ນ ທີ່ຈຳເປັນ.

**ມາດຕາ 83 ການພົວພັນ ລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການທາບທາມຮ່າງກົດໝາຍ ແລະ ການໂຄສະນາ ເຜີຍແຜ່ ກົດໝາຍ;
2. ການລົງເກັບກຳຂໍ້ມູນ ກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ;
3. ການເຂົ້າຮ່ວມຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຢູ່ທ້ອງຖິ່ນ;
4. ການປຶກສາຫາລື ກ່ຽວກັບບັນຫາສຳຄັນອື່ນ ທີ່ຈຳເປັນ.

**ມາດຕາ 84 ການພົວພັນລະຫວ່າງ ສະພາປະຊາຊົນຂັ້ນແຂວງ ກັບອົງການອຳນາດລັດ ຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບອົງການອຳນາດລັດ ຂັ້ນແຂວງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງ ນິຕິກຳທີ່ສຳຄັນ ຂັ້ນແຂວງ;
2. ການຄົ້ນຄວ້າ ກ່ຽວກັບບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
3. ການຄົ້ນຄວ້າ ບຸກຄະລາກອນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ;

4. ການຄົ້ນຄວ້າ ກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ;

5. ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ການເຂົ້າຮ່ວມກອງປະຊຸມສຳຄັນຕ່າງໆ ຂອງອົງການອຳນາດລັດ ຂັ້ນແຂວງ;

6. ການປຶກສາຫາລື ກ່ຽວກັບບັນຫາສຳຄັນອື່ນ ທີ່ຈຳເປັນ.

**ມາດຕາ 85 ການພົວພັນລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບ ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ພົວພັນກັບ ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ດ້ວຍການສົມທົບກັນ ຕາມກຳລະນີ ດັ່ງນີ້:

1. ການກະກຽມ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ການຕິດຕາມກວດກາ ວຽກງານຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ການປຶກສາຫາລື ກ່ຽວກັບບັນຫາສຳຄັນອື່ນ ທີ່ຈຳເປັນ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 86 ຂໍ້ຫ້າມ ສຳລັບສະມາຊິກສະພາປະຊາຊົນຂັ້ນແຂວງ**

ຫ້າມ ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ພຶດຕິກຳ ດັ່ງນີ້:

1. ຂາດການເຂົ້າຮ່ວມກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍບໍ່ມີເຫດຜົນ, ເມີນເສີຍຕໍ່ການປະຕິບັດໜ້າທີ່;

2. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

3. ຈັດຕັ້ງເປັນກຸ່ມກ້ອນ ຫຼື ແບ່ງແຍກຄວາມສາມັກຄີປະຊາຊົນລາວບັນດາເຜົ່າ ແລະ ຄວາມສາມັກຄີພາຍໃນສະພາປະຊາຊົນຂັ້ນແຂວງ;

4. ກໍ່ຄວາມເສຍຫາຍ ຕໍ່ຜົນປະໂຫຍດ ຂອງການຈັດຕັ້ງ, ລວມໝູ່ ຫຼື ບຸກຄົນ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 87 ຂໍ້ຫ້າມ ສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມ ການຈັດຕັ້ງ ແລະ ບຸກຄົນອື່ນ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ສະມາຊິກ ຫຼື ພະນັກງານ ສະພາປະຊາຊົນຂັ້ນແຂວງ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;

2. ຍົກຍ້າຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ຜູ້ປະຈຳການ ໂດຍບໍ່ມີການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3. ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງເອົາຊັບສິນ ຂອງສະພາປະຊາຊົນຂັ້ນແຂວງ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ

### ມາດຕາ 88 ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ

ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ໃຫ້ຖືເອົາ ວັນທີ 4 **ສິງຫາ** 1978 ຊຶ່ງແມ່ນວັນປະກາດໃຊ້ກົດໝາຍວ່າດ້ວຍ ການຈັດຕັ້ງສະພາປະຊາຊົນຂັ້ນຕ່າງໆ.

### ມາດຕາ 89 ງົບປະມານຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ມີ ງົບປະມານສະເພາະ ຊຶ່ງນອນຢູ່ໃນງົບປະມານແຫ່ງລັດຂັ້ນແຂວງ ເພື່ອຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອອກລະບຽບການສະເພາະ ກ່ຽວກັບການຂຶ້ນແຜນ, ຄຸ້ມຄອງ, ກວດກາ ການນຳໃຊ້ງົບປະມານຂອງສະພາປະຊາຊົນຂັ້ນແຂວງ.

### ມາດຕາ 90 ເຄື່ອງໝາຍ ແລະ ກາໝາຍ ຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ມີເຄື່ອງໝາຍ ແລະ ກາໝາຍ ສະເພາະຂອງຕົນ ໂດຍແມ່ນຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງ.

### ມາດຕາ 91 ຕາປະທັບຂອງປະທານສະພາປະຊາຊົນຂັ້ນແຂວງ

ຕາປະທັບຂອງປະທານສະພາປະຊາຊົນຂັ້ນແຂວງ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ", ເບື້ອງລຸ່ມຂຽນວ່າ "ປະທານສະພາປະຊາຊົນແຂວງ......, ນະຄອນຫຼວງ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

### ມາດຕາ 92 ຕາປະທັບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

ຕາປະທັບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ", ເບື້ອງລຸ່ມຂຽນວ່າ " ຄະນະປະຈຳສະພາປະຊາຊົນແຂວງ...., ນະຄອນຫຼວງ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 93 ຕາປະທັບຂອງຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສະພາປະຊາຊົນແຂວງ...., ນະຄອນຫຼວງ ", ເບື້ອງລຸ່ມຂຽນຊື່ຂອງຄະນະກຳມະການ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 94 ຕາປະທັບຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ**

ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນກາງວົງມົນ ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສະພາປະຊາຊົນແຂວງ...., ນະຄອນຫຼວງ ", ເບື້ອງ ລຸ່ມຂຽນວ່າ "ຄະນະເລຂາທິການ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 95 ຕາປະທັບຂອງກົງຈັກ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກົງຈັກຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສະພາປະຊາຊົນແຂວງ..., ນະຄອນຫຼວງ ", ເບື້ອງລຸ່ມຂຽນວ່າ " ໜ່ວຍງານ..... " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 96 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນໃນການປະຕິບັດມະຕິຂອງກອງປະຊຸມ ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 97 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສະພາປະຊາຊົນຂັ້ນແຂວງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 98 ການຈັດຕັ້ງປະຕິບັດ**

ຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ອອກຄໍາແນະນໍາຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 99 ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້